ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ

# ບົດສະເໜີ
## ແນວຄວາມຄິດການກໍ່ສ້າງ

## ໂຄງການ
## ສ້າງສູນສົ່ງເສີມຜູ້ປະກອບການຂອງ ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ



สแกนด้วย CamScanner

## 1. ບົດສັງລວມໂດຍຫຍໍ້ຂອງໂຄງການ

ໂຄງການສ້າງສູນສົ່ງເສີມຜູ້ປະກອບການຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ແມ່ນ ໂຄງການໜຶ່ງທີ່ມີຄວາມສຳຄັນໃນການເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນຂອງບັນດາຜູ້ປະກອບການໃນທົ່ວ ນະຄອນຫລວງວຽງຈັນ ນັບຕັ້ງແຕ່ການສ້າງຜູ້ປະກອບການໃໝ່, ການສ້າງຄວາມເຂັ້ມແຂງໃຫ້ຜູ້ປະກອບການ ຈົນເຖິງການຍົກລະດັບຜູ້ປະກອບການໃຫ້ມີຄວາມສາມາດກ້າວໄກສູ່ລະດັບພາກພື້ນ ແລະ ສາກົນ ກາຍເປັນທ່າແຮງໜຶ່ງໃນການຜັນຂະຫຍາຍຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງນະຄອນຫລວງວຽງຈັນ ໃຫ້ປະກົດຜົນເປັນຈິງ ແລະ ມີປະສິດທິຜົນສູງ.

ອີງການ ປົກຄອງ ນະຄອນຫລວງວຽງຈັນ ໄດ້ໃຫ້ຄວາມສຳຄັນແກ່ການສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ປະກອບການ, ກຸ່ມ ແລະ ສະຫະກອນ ເຊິ່ງໄດ້ອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງສະພາການຄ້າ ແລະ ອຸດສາຫະກຳ ຂັ້ນເມືອງ ສຳເລັດ100% ທັງໝົດ 9 ຕົວເມືອງ ໃນປີ 2022 ເຊິ່ງເປັນສິ່ງທີ່ພາກຜູ້ປະກອບການມີ ຄວາມເຊື່ອໝັ້ນ ແລະ ມີຄວາມພາກພູມໃຈເປັນຢ່າງສູງ.

ໂຄງການ ສ້າງສູນສົ່ງເສີມ ຜູ້ປະກອບການ ຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ຈະເປັນ ສະຖານທີ່ເຕົ້າໂຮມ-ພົບປະ-ແລກປ່ຽນຄວາມຮູ້, ປະສົບການ ໃນບັນດາຜູ້ປະກອບການທຸລະກິດ, ມີບ່ອນຮຽນຮູ້ໃນການສ້າງຜູ້ປະກອບການໃໝ່ໃຫ້ມີປະຊາກອນທຸລະກິດເພີ່ມຫລາຍຂຶ້ນ ໂດຍສະເພາະແມ່ນຄົນລຸ້ນໃໝ່ທີ່ມີຄວາມໄຝ່ຝັນຢາກມີທຸລະກິດເປັນຂອງຕົນເອງ, ມີບ່ອນຈັດກິດຈະກຳສົ່ງເສີມການຜະລິດ, ສົ່ງເສີມສິນຄ້າຂອງບັນດາຄອບຄົວຕົວແບບ, ສິນຄ້າ ODOP, ແລະ ສິນຄ້າ ຜະລິດຕະພັນລາວທົ່ວໄປ, ຈັດກິດຈະກຳແລກປ່ຽນສິນຄ້າລະຫວ່າງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ກັບສະພາການຄ້າຂອງບັນດາປະເທດໃກ້ຄຽງ ແລະ ມີສູນພັດທະນາສີມືແຮງງານ, ສູນທົດສອບ ແລະ ຢັ້ງຢືນສີມືແຮງງານຮ່ວມມືລະ ຫວ່າງພາກລັດ ແລະ ພາກທຸລະກິດ, ມີສູນຕ້ອນຮັບແຮງງານເຄື່ອນຍ້າຍຈາກຊົນນະບົດເຂົ້າມາຕົວເມືອງກ່ອນທີ່ ຈະຖືກນຳສົ່ງເຂົ້າສູ່ສະຖານປະກອບການ ແລະ ການຈັດງານຕະຫລາດນັດແຮງງານ.

## 2. ເຫດຜົນ ແລະ ຄວາມສຳຄັນຂອງໂຄງການ

ອີງຕາມ ຂໍ້ຕົກລົງຂອງເຈົ້າຄອງ ນະຄອນຫລວງວຽງຈັນ ສະບັບເລກທີ 460/ຈຄ, ລົງວັນທີ 24/4/2023 ວ່າດ້ວຍການຮັບຮອງເອົາຄະນະບໍລິຫານງານ ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ຊຸດໃໝ່ຕາມກອງປະຊຸມໃຫຍ່ ຄັ້ງທີ II ຊຸດທີ III ແລະ ອີງໃສ່ເນື້ອໃນທິດຊີ້ນຳຂອງທ່ານເຈົ້າຄອງນະຄອນຫລວງວຽງຈັນ ກ່ຽວກັບການນຳພາສະມາຊິກ ແລະ ອົງກອນ ຂອງສະພາການຄ້າ ແລະ ອຸດສາຫະກຳນະຄອນຫລວງວຽງຈັນ ໃຫ້ມີຄວາມເຂັ້ມແຂງທາງດ້ານປະລິມານ ກໍ່ຄືທາງດ້ານຄຸນນະພາບ.

ນະຄອນຫຼວງວຽງຈັນ ແມ່ນສູນກາງຂອງການເມືອງ, ເສດຖະກິດ ຂອງປະເທດ ເປັນໃບໜ້າໃບຕາຂອງປະເທດ ມີຜູ້ຄົນທັງພາຍໃນ ແລະ ຕ່າງປະເທດ ໄປມາຫາສູ່ເປັນຈຳນວນມະຫາສານ, ມີການພົບປະ-ແລກປ່ຽນລະຫວ່າງ ສະມາຄົມ, ສະພາການຄ້າ ແລະ ນັກລົງທຶນຈາກບັນດາປະເທດໃນພາກພື້ນ ແລະ ສາກົນຕະຫລອດເຖິງຜູ້ປະກອບການຂອງບັນດາແຂວງຂອງປະເທດໃກ້ຄຽງ ແຕ່ສະພາການຄ້າ ແລະ ອຸດສາຫະກຳນະຄອນຫລວງວຽງຈັນ ຍັງບໍ່ມີຫ້ອງການເປັນຂອງຕົນເອງ ແລະ ຍັງບໍ່ມີສະຖານທີ່ທີ່ເປັນບ່ອນເຕົ້າໂຮມ-ພົບປະ



สแกนด้วย CamScanner

ແລກປ່ຽນຂໍ້ມູນຂ່າວສານ, ການຮຽນຮູ້-ນັກທຸລະກິດ ແລະ ການແລກປ່ຽນຊື້-ຂາຍໃນບັນດາຜູ້ປະກອບການ.

ລັດຖະບານ ສປປ ລາວ ກໍຄືອົງການ ປົກຄອງ ນະຄອນຫລວງວຽງຈັນ ໄດ້ເອົາໃຈໃສ່ໃນການດຶງດູດການລົງທຶນ ທັງພາຍໃນ ແລະ ການລົງທຶນຕ່າງປະເທດ ມີການອຳນວຍຄວາມສະດວກໃນການສ້າງເຂດຖະກິດພິເສດ-ເຂດ ເສດຖະກິດສະເພາະ ເຊິ່ງເຫັນໄດ້ວ່າມີເຂດເສດຖະກິດພິເສດຫລາຍແຫ່ງເກີດຂຶ້ນຢູ່ນະຄອນຫຼວງວຽງຈັນ ແລະ ມີນັກລົງທຶນເຂົ້າມາລົງທຶນຈຳນວນຫລາຍ ເປັນຕົ້ນແມ່ນເຂດ VITA PARK, ເຂດກອມລອມໄຊເສດຖາ, ເຂດບຶງທາດຫລວງ ແລະ ອື່ນໆ.

ອີກດ້ານໜຶ່ງ, ລັດຖະບານ ສປປ ລາວ ກໍຄືອົງການປົກຄອງນະຄອນຫລວງວຽງຈັນໄດ້ເປີດປີທ່ອງທ່ຽວລາວໃນປີ 2024 ເຊິ່ງມີນັກທ່ອງທ່ຽວທັງພາຍໃນ ແລະ ນັກທ່ອງທ່ຽວຈາກຕ່າງປະເທດຕ່າງກໍຫລັ່ງໄຫລເຂົ້າມາທ່ອງທ່ຽວເພີ່ມຂຶ້ນຈຳນວນມະຫາສານ ເປັນທ່າແຮງອັນສຳຄັນໃນການຂັບເຄື່ອນເສດຖະກິດລາວໃຫ້ມີຄວາມເຂັ້ມ ແຂງ ອັນສະແດງອອກຢູ່ທີ່ການເພີ່ມຂຶ້ນຂອງຜູ້ໂດຍສານທີ່ເດີນທາງຜ່ານສາຍການບິນ, ລົດໄຟ ແລະ ຊ່ອງທາງອື່ນໆ.

ແຕ່ຄຽງຄູ່ກັບທ່າກ້າວໃນດ້ານດັ່ງໜ້າ ກໍຍັງມີບາງບັນຫາທີ່ຄົງຄ້າງ ແລະ ສິ່ງທ້າທາຍ ໂດຍສະເພາະແມ່ນສະພາບເສດຖະກິດທີ່ກຳລັງພົບກັບຄວາມທ້າທາຍຈາກສະພາບເງິນເຟີ້ ຄ່າຄອງຊີບສູງ ເຮັດໃຫ້ກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນລາວ, ຊາວຜູ້ອອກແຮງງານ, ພະນັກງານ, ກຳມະກອນ ອັນເຮັດໃຫ້ແຮງງານລາວເກີດມີແນວຄິດຄອບແຄບບໍ່ຢາກເຮັດວຽກຢູ່ພາຍໃນປະເທດ ເນື່ອງຈາກວ່າລາຍໄດ້ບໍ່ກຸ້ມກັບລາຍຈ່າຍ ແຮງງານຈຳນວນຫລາຍຢາກໄປເຮັດວຽກຢູ່ຕ່າງປະເທດ ເຊິ່ງສິ່ງພົນກະທົບໂດຍກົງໃຫ້ແກ່ບາກຜູ້ປະກອບ ການທຸລະກິດ ຫຼາຍໂຮງງານຂາດແຄນແຮງງານ ມີນັກລົງທຶນເຂົ້າມາລົງທຶນແລ້ວຂາດແຮງງານ, ໂຮງແຮມ-ຮ້ານອາຫານ ຂາດແຄນແຮງງານ ມີນັກທ່ອງທ່ຽວເຂົ້າມາຫລາຍແຕ່ຂາດແຮງງານໃນການບໍລິການຢ່າງມີຄຸນນະພາບ ແລະ ອື່ນໆ.

## 3. ຈຸດປະສົງ ເປົ້າໝາຍຂອງໂຄງການ

ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພາກຜູ້ປະກອບການໃຫ້ກາຍເປັນກຳລັງແຮງສຳຄັນປະກອບສ່ວນສ້າງເສດຖະກິດຂອງນະຄອນຫລວງວຽງຈັນ ກໍຄືຂອງປະເທດຊາດໃຫ້ມີຄວາມເຂັ້ມແຂງຕາມທິດຊີ້ນຳຂອງພັກ ແລະ ລັດ ຢ່າງມີຄວາມໝັ້ນທ່ຽງ. ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ມີຄວາມຈຳເປັນຢ່າງຍິ່ງໃນການມີສະຖານທີ່ເປັນສູນເຕົ້າໂຮມຜູ້ປະກອບການ ໃນການສົ່ງເສີມຜູ້ປະກອບການຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ.

ເປົ້າໝາຍຂອງການສ້າງສູນສົ່ງເສີມຜູ້ປະກອບການຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ແມ່ນແນໃສ່ເປົ້າໝາຍໃສ່ການເຕົ້າໂຮມຜູ້ປະກອບການ, ສ້າງຜູ້ປະກອບການໃໝ່, ການສົ່ງເສີມການຜະລິດສິນຄ້າ ເປັນຕົ້ນແມ່ນສິນຄ້າກະສິກຳ, ສິນຄ້າຄອບຄົວຕົວແບບ, ສິນຄ້າ ODOP ແລະ ສິນຄ້າອື່ນໆຂອງບັນດາ ສະມາຊິກໃຫ້ມີຊ່ອງທາງໃນການຂະຫຍາຍຕະຫລາດ.



สแกนด้วย CamScanner

[illegible]

4. ພາກສ່ວນທີ່ກ່ຽວຂ້ອງ

ການນຳໃຊ້ ແລະ ການເຄື່ອນໄຫວກິດຈະກຳໃນສູນສົ່ງເສີມຜູ້ປະກອບການຂອງສະມາຄົມການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງວຽງຈັນ ເຊິ່ງຄາດວ່າຈະເຮັດວຽກຮ່ວມກັບຫຼາຍພາກສ່ວນຂອງອົງການປົກຄອງ ນະຄອນຫຼວງວຽງຈັນ ເປັນຕົ້ນແມ່ນ:

4.1. ພາກລັດ:

1.) ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ
2.) ພະແນກ ແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ
3.) ພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ
4.) ພະແນກ ສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ
5.) ພະແນກ ກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ
6.) ພະແນກ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ
7.) ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ
8.) ຄະນະຄຸ້ມຄອງ ເຂດເສດຖະກິດພິເສດ ເຂດເສດຖະກິດສະເພາະ ນະຄອນຫຼວງວຽງຈັນ
9.) ສະຫະພັນ ກຳມະບານ ນະຄອນຫຼວງວຽງຈັນ
10.) ອົງການ ຈັດຕັ້ງຊາວໜຸ່ມ ປະຊາຊົນ ປະຕິວັດລາວ ນະຄອນຫຼວງວຽງຈັນ
11.) ສະຫະພັນ ແມ່ຍິງ ນະຄອນຫຼວງວຽງຈັນ
12.) ອົງການ ປົກຄອງເມືອງ
13.) ແລະ ພາກສ່ວນອື່ນໆ

4.2. ພາກທຸລະກິດ:

1.) ສະພາການຄ້າ ແລະ ອຸດສາຫະກຳ ຂັ້ນເມືອງ
2.) ສະມາຄົມທຸລະກິດ
3.) ຜູ້ປະກອບການ
4.) ກຸ່ມຜູ້ຜະລິດ
5.) ສະຫະກອນ
6.) ແລະ ອື່ນໆ

4.3. ອົງການຈັດຕັ້ງສາກົນ:

1.) ອົງການແຮງງານສາກົນ ILO
2.) ອົງການແຮງງານເຄື່ອນຍ້າຍ IOM



สแกนด้วย CamScanner

## 5. ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບຈາກໂຄງການ

ໂຄງການສ້າງສູນສົ່ງເສີມຜູ້ປະກອບການຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ຄາດວ່າຈະໄດ້ຮັບຜົນປະໂຫຍດ ດັ່ງນີ້:

(1) ການສົ່ງເສີມການລົງທຶນ ແລະ ການທ່ອງທ່ຽວຂອງພາກລັດຖະບານ ກໍຄືຂອງອົງການປົກຄອງ ນະຄອນຫລວງວຽງຈັນ ມີປະສິດທິຜົນ.

(2) ຜູ້ປະກອບການໃນນະຄອນຫລວງວຽງຈັນມີສະຖານທີ່ເຕົ້າໂຮມພົບປະ-ແລກປ່ຽນກັນ

(3) ຜູ້ຜະລິດໄດ້ມີບ່ອນຂາຍສິນຄ້າ ແລະ ຜະລິດຕະພັນ

(4) ຜູ້ປະກອບການມີການຊື້-ຂາຍ ແລະ ມອບພັນທະເຂົ້າງົບປະມານ

(5) ມີການສ້າງຜູ້ປະກອບການໃຫມ່ເພີ່ມປະຊາກອນຂອງຜູ້ປະກອບການໃຫ້ຫລາຍຂື້ນ

(6) ແຮງງານ ແລະ ນັກຮຽນນັກສຶກສາ ໄດ້ຮັບການພັດທະນາ ແລະ ເຂົ້າສູ່ຕຳແໜ່ງງານຫລາຍຂື້ນ

(7) ຜູ້ລົງທຶນມີແຮງງານສະໜອງເຂົ້າຫລະກິດຢ່າງພຽງພໍ ທັງປະລິມານ ແລະ ຄຸນນະພາບ.

(8) ອົງການປົກຄອງ ນະຄອນຫລວງວຽງຈັນ ໄດ້ຮັບລາຍໄດ້ຈາກການສຳປະທານ ແລະ ການປະກອບພັນທະຂອງຜູ້ປະກອບການ.

## 6. ວິທີຈັດຕັ້ງປະຕິບັດໂຄງການ

ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ໄດ້ມີກຸ່ມຜູ້ປະກອບການທີ່ພ້ອມເສຍສະຫລະໃນການສ້າງສູນສົ່ງເສີມຜູ້ປະກອບການຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ເຊິ່ງຄາດວ່າຈະມີຂັ້ນຕອນ ດັ່ງນີ້:

(1) ສ້າງອາຄານຫ້ອງການຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ

(2) ສ້າງອາຄານຫ້ອງການໃຫ້ເຊົ່າ-ຫ້ອງປະຊຸມ

(3) ສ້າງຮ້ານອາຫານ-ກາເຟ

(4) ສ້າງຫ້ອງວາງສະແດງຂາຍສິນຄ້າຜະລິດຕະພັນລາວ, ສິນຄ້າຄອບຄົວຕົວແບບ ແລະ ສິນຄ້າ ODOP

(5) ສ້າງລານກິດຈະກຳ Exhibition

(6) ສ້າງຈຸດຕ້ອນຮັບ, ທີ່ພັກ ແລະ ການຝຶກອົບຮົມ ແຮງງານ

(7) ສ້າງສູນທົດສອບ ແລະ ຢັ້ງຢືນສີມືແຮງງານ

## 7. ໄລຍະເວລາຂອງໂຄງການ

ໄລຍະເວລາຂອງການດຳເນີນໂຄງການສົ່ງເສີມຜູ້ປະກອບການຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ປະມານ 30-50ປີ.

## 8. ການລົງທຶນ

ການລົງທຶນແມ່ນຜູ້ປະກອບການຂອງສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫລວງວຽງຈັນ ຮ່ວມກັບຜູ້ປະກອບການສະພາການຄ້າ ແລະ ອຸດສາຫະກຳ ຂັ້ນເມືອງ ເຊິ່ງລາຍລະອຽດຂອງການລົງທຶນຈະມີການລົງເລິກໃນລາຍລະອຽດຂອງແຕ່ລະກິດຈະກຳຕື່ມອີກ.



สแกนด้วย CamScanner